**LOWELL PUBLIC SCHOOLS**
Henry J. Mroz Central Administration Offices
(ສໍານັກງານບໍລິຫານສ່ວນກາງ Henry J. Mroz)
155 Merrimack Street
Lowell, MA 01852

ວັນທີ 22 ທັນວາ 2020

ສະບາຍດີ ຊຸມຊົນຂອງໂຮງຮຽນ Lowell Public Schools,

ຂ້າພະເຈົ້າຫວັງວ່າທ່ານ ແລະ ຄອບຄົວຂອງທ່ານຄົງປອດໄພ ແລະ ສະບາຍດີໃນຂະນະທີ່ພວກເຮົາກໍາລັງກ້າວເຂົ້າສູ່ມື້ພັກຂອງພວກເຮົາ. ເນື່ອງຈາກພັກແລ້ງລະດູໜາວກໍຈະເລີ່ມຕົ້ນຂຶ້ນເມື່ອສິ້ນສຸດການຮຽນການສອນໃນວັນພຸດ, ຂ້າພະເຈົ້າຈຶ່ງຢາກແບ່ງປັນຂໍ້ມູນອັບເດດກ່ຽວກັບພະຍາດອັກເສບປອດ ໂຄວິດ-19 (COVID-19) ໃນຂັ້ນທ້ອງຖິ່ນໃຫ້ທ່ານຮັບຊາບ ພ້ອມທັງວິທີການທີ່ພວກເຮົາຕິດຕາມຂໍ້ມູນດັ່ງກ່າວນັ້ນຢ່າງຕໍ່ເນື່ອງໃນຂະນະທີ່ພວກເຮົາພິຈາລະນາວັນທີທີ່ເປັນໄປໄດ້ໃນການສືບຕໍ່ເຂົ້າຮັບການສຶກສາພາຍໃນໂຮງຮຽນ.

ທຸກໆວັນພະຫັດ, Commonwealth (ເຄືອຈັກກະພົບ) ຈະເຜີຍແຜ່ແພັດຟອມອອນລາຍກ່ຽວກັບຂໍ້ມູນ ໂຄວິດ-19 (COVID-19) ໂດຍອີງຕາມຊຸມຊົນ. ເຊິ່ງບົດລາຍງານສະບັບຫຼ້າສຸດໄດ້ສະແດງໃຫ້ເຫັນວ່າ: ຂໍ້ມູນ ໂຄວິດ-19 (COVID-19) ໃນເມືອງ Lowell ແຫ່ງນີ້ - ແລະ ທົ່ວທັງລັດ Massachusetts - ຍັງຄົງມີແນວໂນ້ມສືບຕໍ່ໄປໃນທິດທາງທີ່ບໍ່ດີ. ຈໍານວນຜູ້ຕິດເຊື້ອລາຍວັນໂດຍສະເລ່ຍຕໍ່ພົນລະເມືອງ 100,000 ຄົນ ໄດ້ເພີ່ມຂຶ້ນເປັນ 134.4 ແລະ “ອັດຕາສ່ວນຮ້ອຍຂອງຜົນທົດສອບເປັນບວກ” (ເປີເຊັນຂອງການທົດສອບຫາເຊື້ອທີ່ມີຜົນເປັນບວກໃນເມືອງ Lowell ແຫ່ງນີ້) ໄດ້ເພີ່ມຂຶ້ນເປັນ 12.33%. ຕົວເລກທັງສອງນັ້ນແມ່ນເກີນເກນທີ່ກໍານົດໄວ້ຂອງ Commonwealth (ເຄືອຈັກກະພົບ) ຢ່າງຫຼວງຫຼາຍ ເຊິ່ງໄດ້ເຮັດໃຫ້ເມືອງ Lowell ຢູ່ໃນສະຖານະທີ່ມີຄວາມສ່ຽງສູງ. ຈາກການສົມທຽບ, ຍ້ອນກັບໄປໃນຊ່ວງກາງເດືອນຕຸລາ, ອັດຕາຜູ້ຕິດເຊື້ອສະເລ່ຍປະຈໍາວັນຂອງເມືອງ Lowell ແມ່ນຢູ່ທີ່ 16.4 ແລະ ເປີເຊັນຜົນທົດສອບເປັນບວກຂອງພວກເຮົາແມ່ນ 3.29%. ສ່ວນໃນຊ່ວງກາງເດືອນພະຈິກ, ອັດຕາຜູ້ຕິດເຊື້ອສະເລ່ຍປະຈໍາວັນຂອງພວກເຮົາແມ່ນຢູ່ທີ່ 42.1 ແລະ ອັດຕາສ່ວນຮ້ອຍຂອງຜົນທົດສອບເປັນບວກຂອງພວກເຮົາແມ່ນ 6.45%.

ສຸຂະພາບ ແລະ ຄວາມປອດໄພຂອງນັກຮຽນ ແລະ ເຈົ້າໜ້າທີ່ຂອງພວກເຮົາ ແມ່ນຖືເປັນສິ່ງທີ່ສໍາຄັນທີ່ສຸດຕໍ່ທຸກໆການຕັດສິນໃຈຂອງພວກເຮົາ, ດັ່ງນັ້ນ **ເມື່ອໂຮງຮຽນກັບມາດໍາເນີນການຕໍ່ຫຼັງຈາກມື້ພັກລະດູໜາວໃນວັນຈັນທີ 4 ມັງກອນ 2021, ນັກຮຽນປະຈໍາໂຮງຮຽນ Lowell Public Schools ທຸກໆຄົນກໍຈະດໍາເນີນການຮຽນການສອນຜ່ານຮູບແບບທາງໄກຕໍ່ໄປ.**

ໃນຄືນທີ່ຜ່ານມາ, ພາຍຫຼັງການປຶກສາຫາລືຮ່ວມກັບຄະນະກໍາມະການດ້ານສຸຂະພາບ, ຄະນະກໍາມະການປະຈໍາໂຮງຮຽນໄດ້ກໍານົດບັນດາວັນທີທີ່ເປັນເປົ້າໝາຍໃນການອະນຸຍາດໃຫ້ນັກຮຽນກັບຄືນມາຮັບການສຶກສາພາຍໃນຫ້ອງຮຽນຄືດັ່ງຕໍ່ໄປນີ້, ຫາກວ່າຂໍ້ມູນກ່ຽວກັບ ໂຄວິດ-19 (COVID-19) ສາມາດປັບປຸງໃຫ້ດີຂຶ້ນເປັນໄລຍະ:

- ວັນທີ 1 ກຸມພາ - ບັນດານັກຮຽນໃນໂປຣແກຣມການສຶກສາພິເສດທີ່ແຍກອອກຕ່າງຫາກຢ່າງສິ້ນເຊີງ ເຊິ່ງກ່ອນໜ້ານີ້ໄດ້ເຂົ້າຮ່ວມຮູບແບບການຮຽນການສອນໃນຫ້ອງຮຽນຂອງພວກເຮົາ
- ວັນທີ 1 ມີນາ - ບັນດານັກຮຽນທີ່ບໍ່ໄດ້ຢູ່ໃນໂປຣແກຣມການສຶກສາພິເສດທີ່ແຍກອອກຕ່າງຫາກຢ່າງສິ້ນເຊີງ, ແຕ່ກ່ອນໜ້ານີ້ໄດ້ເຂົ້າຮັບການສຶກສາພາຍໃນຫ້ອງຮຽນໃນສົກຮຽນນີ້ ເຊິ່ງເປັນສ່ວນໜຶ່ງຂອງແຜນເປີດການຮຽນການສອນຄືນໃໝ່ສະບັບເດີມຂອງພວກເຮົາ
- ວັນທີ 1 ເມສາ - ການຂະຫຍາຍຮູບແບບການຮຽນການສອນພາຍໃນຫ້ອງຮຽນຂອງພວກເຮົາ ເພື່ອໃຫ້ລວມເອົາບັນດານັກຮຽນເພີ່ມເຕີມນອກເໜືອຈາກທີ່ໄດ້ເຂົ້າຮັບການສຶກສາພາຍໃນໂຮງຮຽນເມື່ອຕົ້ນປີການສຶກສາຂອງສົກຮຽນນີ້

ບັນດາວັນທີເຫຼົ່ານີ້ບໍ່ໄດ້ກໍານົດໄວ້ຢ່າງຕາຍຕົວ ແລະ ພວກເຮົາຈະສືບຕໍ່ກວດສອບຂໍ້ມູນ ໂຄວິດ-19 (COVID-19) ແລະ ທໍາການປຶກສາຫາລືຮ່ວມກັບຄະນະກໍາມະການດ້ານສຸຂະພາບ. ພ້ອມນັ້ນພວກເຮົາກໍຈະແຈ້ງຂໍ້ມູນອັບເດດຕ່າງໆໃຫ້ທ່ານຮັບຊາບ ໃນຂະນະທີ່ພວກເຮົາທໍາການພິຈາລະນາເຖິງແຜນການຮຽນການສອນຂອງພວກເຮົາໃນອະນາຄົດຕໍ່ໄປ. ເຖິງແມ່ນວ່າພວກເຮົາຈະບໍ່ໄດ້ກັບຄືນໄປສຶກສາຮໍ່າຮຽນພາຍໃນຫ້ອງຮຽນຊ່ວງຕົ້ນປີ

2021, ພວກເຮົາກໍ່ຈະສືບຕໍ່ມອບປະສົບການໃນການສຶກສາຜ່ານຮູບແບບທາງໄກທີ່ມີຄວາມປອດໄພ ແລະ ມີຄວາມໝາຍຄວາມສໍາຄັນໃຫ້ແກ່ນັກຮຽນຂອງພວກເຮົາ.

ເຊັ່ນເຄີຍ, ກະລຸນາຢ່າລືມສືບຕໍ່ປະຕິບັດຕາມມາດຕະການດ້ານຄວາມປອດໄພ ເຊິ່ງຊ່ວຍຫຼຸດຜ່ອນການແຜ່ລະບາດຂອງພະຍາດອັກເສບປອດ ໂຄວິດ-19 (COVID-19). ເຊິ່ງນີ້ລວມໄປເຖິງການຮັກສາໄລຍະຫ່າງທາງສັງຄົມ, ການໃສ່ໜ້າກາກ, ການລ້າງມືຂອງທ່ານ, ການບໍ່ຮວມໂຕກັນເປັນກຸ່ມໃຫຍ່ ແລະ ການບໍ່ແບ່ງປັນອາຫານ, ເຄື່ອງດື່ມ ຫຼື ໃຊ້ອຸປະກອນຮັບປະທານອາຫານຮ່ວມກັນ. ຍິ່ງພວກເຮົາສາມາດຫຼຸດຈຳນວນຜູ້ຕິດເຊື້ອພະຍາດອັກເສບປອດ ໂຄວິດ-19 (COVID-19) ຂອງພວກເຮົາໃນເມືອງ Lowell ແຫ່ງນີ້ໄດ້ໄວເທົ່າໃດ, ພວກເຮົາກໍຍິ່ງສາມາດອະນຸຍາດໃຫ້ນັກຮຽນໃນຈຳນວນທີ່ເພີ່ມຂຶ້ນກັບເຂົ້າມາຮໍ່າຮຽນພາຍໃນອາຄານຮຽນຂອງພວກເຮົາໄດ້ໄວເທົ່ານັ້ນ.

ປີນີ້ເປັນປີແຫ່ງຄວາມພະຍາຍາມດ້ວຍເຫດຜົນຫຼາຍປະການທີ່ແຕກຕ່າງກັນ, ດັ່ງນັ້ນຂ້າພະເຈົ້າຈຶ່ງຢາກຂອບໃຈໃນຄວາມອົດທົນ, ການປັບຕົວ ແລະ ການໃຫ້ຄວາມຮ່ວມມືຂອງທ່ານຕະຫຼອດຊ່ວງໄລຍະເວລາທີ່ບໍ່ເຄີຍພົບພໍ້ມາກ່ອນເຊັ່ນນີ້ຢ່າງສະເໝີມາ.

ຂໍອວຍພອນໃຫ້ທ່ານຈົ່ງມີຄວາມສຸກ ແລະ ມີສຸຂະພາບແຂງແຮງໃນປີໃໝ່ທີ່ຈະມາເຖິງນີ້,

Dr. Joel D. Boyd
Superintendent of Schools (ຜູ້ບໍລິຫານໂຮງຮຽນ)